ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1364 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 11 ກໍລະກົດ 2022

## ສະໂນດນຳສົ່ງ

ເຖິງ: - ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ;

- ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ;
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ
- ຫ້ອງການພາສີປະຈຳແຂວງ, ນະຄອນຫຼວງວຽງຈັນ ແລະ ດ່ານພາສີສາກົນທົ່ວປະເທດ

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດນຳສົ່ງເອກະສານ ມາຍັງ ທ່ານ ເພື່ອຊາບ ດັ່ງນີ້:

| ລ/ດ | ເນື້ອໃນ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | ບົດບັນທຶກ ກອງປະຊຸມປຶກສາຫາລື ກ່ຽວກັບ ການຄຸ້ມຄອງອະນຸຍາດນຳເຂົ້າ, ຜ່ານແດນ (ນຳຜ່ານ), ສົ່ງອອກ, ນຳເຂົ້າສົ່ງອອກຊົ່ວຄາວ, ນຳເຂົ້າ ເພື່ອສົ່ງອອກຕໍ່ ໄມ້ ແລະ ຜະລິດຕະພັນໄມ້, ພາຫະນະຂຸດຄົ້ນໄມ້ ແລະ ຈັກຂຸດຄົ້ນໄມ້ ລະຫວ່າງ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ກັບ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ລົງວັນທີ 7 ກໍລະກົດ 2022 | 1 ສະບັບ | ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ |

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບຕາມນີ້ດ້ວຍ.

ຫົວໜ້າຫ້ອງການ

ວິທູນ ສິດທິບໍລະຄຳ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດບັນທຶກ

## ກອງປະຊຸມປຶກສາຫາລື ກ່ຽວກັບ ການຄຸ້ມຄອງອະນຸຍາດນຳເຂົ້າ, ຜ່ານແດນ (ນຳຜ່ານ), ສົ່ງອອກ, ນຳເຂົ້າສົ່ງອອກຊົ່ວຄາວ, ນຳເຂົ້າ ເພື່ອສົ່ງອອກຕໍ່ ໄມ້ ແລະ ຜະລິດຕະພັນໄມ້, ພາຫະນະຂຸດຄົ້ນໄມ້ ແລະ ຈັກຂຸດຄົ້ນໄມ້

- ອີງຕາມ ບົດບັນທຶກ ການພົບປະ ລະຫວ່າງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອປຶກສາຫາລື ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ສະບັບລົງວັນທີ 05 ເມສາ 2022;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກົມປ່າໄມ້ ສະບັບເລກທີ 1505/ກປ, ລົງວັນທີ 22 ເມສາ 2022;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 1163/ອຄ, ລົງວັນທີ 1 ກໍລະກົດ 2016.

ໃນວັນທີ 07 ກໍລະກົດ 2022 ເວລາ 14:00 ໂມງ ຢູ່ທີ່ຫ້ອງປະຊຸມກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ມີກອງປະຊຸມປຶກສາຫາລື ກ່ຽວກັບ ການຄຸ້ມຄອງ ອະນຸຍາດນຳເຂົ້າ, ຜ່ານແດນ (ນຳຜ່ານ), ສົ່ງອອກ, ນຳເຂົ້າສົ່ງອອກຊົ່ວຄາວ, ນຳເຂົ້າ ເພື່ອສົ່ງອອກ ຕໍ່ ໄມ້ ແລະ ຜະລິດຕະພັນໄມ້, ພາຫະນະຂຸດຄົ້ນໄມ້ ແລະ ຈັກຂຸດຄົ້ນໄມ້ ໂດຍການເປັນປະທານຮ່ວມຂອງ ທ່ານ ຊູຊາດ ໄຊຍະກຸມມານ ຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ແລະ ທ່ານ ນາງ ມະນີວອນ ວົງໄຊ ຫົວໜ້າ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍມີ ຮອງຫົວໜ້າກົມ, ຕາງໜ້າ ກົມກວດກາປ່າໄມ້, ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ວິຊາການ ຂອງທັງສອງກະຊວງ ເຂົ້າຮ່ວມ (ລາຍຊື່ຄັດຕິດມາພ້ອມນີ້) ຜ່ານການປຶກສາຫາລື, ທັງສອງກົມ ເຫັນດີ ເປັນເອກະພາບ ໃຫ້ປະຕິບັດ ດັ່ງນີ້:

1. ການອະນຸຍາດນຳເຂົ້າ, ຜ່ານແດນ (ນຳຜ່ານ), ສົ່ງອອກ, ນຳເຂົ້າ-ສົ່ງອອກຊົ່ວຄາວ, ນຳເຂົ້າ ເພື່ອສົ່ງອອກຕໍ່ປະເພດໄມ້ ແລະ ຜະລິດຕະພັນໄມ້, ພາຫະນະຂຸດຄົ້ນໄມ້ ແລະ ຈັກຂຸດຄົ້ນໄມ້ ແມ່ນຂະແໜງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຮັບຜິດຊອບ ອອກໃບອະນຸຍາດ ບົນພື້ນຖານການຢັ້ງຢືນ ແລະ ເຫັນດີ ຂອງຂະແໜງກະສິກຳ ແລະ ປ່າໄມ້. ສຳລັບ ປະເພດໄມ້, ເຄື່ອງປ່າຂອງດົງ ລວມທັງ ພືດ ແລະ ສັດປ່າ ທີ່ນອນໃນບັນຊີຂອງ CITES ແມ່ນຕ້ອງໄດ້ອະນຸຍາດຈາກ ໜ່ວຍງານ CITES ຂອງ ສປປ ລາວ (ກົມປ່າໄມ້);
2. ການສົ່ງອອກໄມ້ປູກ ໄປຕ່າງປະເທດ ໃຫ້ປະຕິບັດຕາມຂັ້ນຕອນ ທີ່ລະບຸໄວ້ ໃນຄຳແນະນຳ ກ່ຽວກັບ ການສົ່ງອອກໄມ້ສວນປູກ ສະບັບເລກທີ 0981/ອຄ, ລົງວັນທີ 19 ຕຸລາ 2021 ຕາມແບບຟອມ ອຄ 02 ຈົນກວ່າຈະມີການປັບປຸງນິຕິກຳ ສະບັບໃໝ່ ເພື່ອປ່ຽນແທນ;

3. ການສົ່ງອອກ ຜະລິດຕະພັນໄມ້ທຳມະຊາດ ໄປຕ່າງປະເທດ ໃຫ້ປະຕິບັດຕາມຂັ້ນຕອນ ທີ່ລະບຸໄວ້ ໃນຄຳແນະນຳ ກ່ຽວກັບ ການສົ່ງອອກໄມ້ທຳມະຊາດ ສະບັບເລກທີ 0332/ອຄ, ລົງວັນທີ 22 ມີນາ 2022 ຕາມແບບຟອມ ອຄ 01 ຈົນກວ່າຈະມີການປັບປຸງນິຕິກຳ ສະບັບໃໝ່ ເພື່ອປ່ຽນແທນ;
4. ມອບໃຫ້ທັງສອງກົມ ລາຍງານການນຳກະຊວງຂອງຕົນ ເພື່ອຊາບ ແລະ ຊີ້ນຳຂະແໜງການຂອງຕົນ ຢູ່ຂັ້ນທ້ອງຖິ່ນ ຈັດຕັ້ງປະຕິບັດ ຕາມບົດບັນທຶກສະບັບນີ້ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ ຈົນກວ່າຈະມີການປັບປຸງນິຕິກຳ ໃນຕໍ່ໜ້າ.

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດ.

ນະຄອນຫຼວງວຽງຈັນ, ວັນທີ 07 ກໍລະກົດ 2022.

**ຫົວໜ້າ ກົມປ່າໄມ້**

ຊູຊາດ ໄຊຍະກຸມມານ

**ຫົວໜ້າ ກົມການນຳເຂົ້າ ແລະ ສົ່ງອອກ**

ນ. ມະນີວອນ ວົງໄຊ